

# ປະຫວັດສາດ
# ພັກປະຊາຊົນປະຕິວັດລາວ

( ໂດຍສັງເຂບ )

ສະຖາບັນວິທະຍາສາດສັງຄົມແຫ່ງຊາດ

2010

# ປະຫວັດສາດ

# ພັກປະຊາຊົນປະຕິວັດລາວ

## ( ໂດຍສັງເຂບ )

23 Dec. 2014

**2010**

ໄດມອນ ສ.ພານຸສິດ
Diamond S. PHANOUSITH



**ໄກສອນ ພົມວິຫານ**

ເລຂາຄະນະຊີ້ນຳ, ເລຂາທິການໃຫຍ່, ປະທານຄະນະບໍລິຫານ
ງານສູນກາງພັກ ປະຊາຊົນປະຕິວັດລາວ ແຕ່ປີ 1955 - 1992



**ຄຳໄຕ ສີພັນດອນ**

ປະທານຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ

(ແຕ່ປີ 1992 - 2006)



**ຈູມມະລີ ໄຊຍະສອນ**

ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງ

ພັກປະຊາຊົນປະຕິວັດລາວ

# ຄຳນຳ

ໃນເວລາກວ່າເຄິ່ງສະຕະວັດທີ່ຜ່ານມາ, ໂດຍພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ, ປະຊາຊົນລາວບັນດາເຜົ່າ ໄດ້ສ້າງໜ້າປະຫວັດສາດໃໝ່ທີ່ສະຫວ່າງສະໄຫວທີ່ສຸດໃຫ້ແກ່ຊາດລາວ; ປະຊາຊົນລາວ ໄດ້ຕໍ່ສູ້ຜາບແພ້ຈັກກະພັດລ່າເມືອງຂຶ້ນໃຫຍ່ 2 ໂຕ (ທັງຈັກກະພັດລ່າເມືອງຂຶ້ນແບບເກົ່າ ແລະ ແບບໃໝ່), ລົບລ້າງລະບອບລາຊາທິປະໄຕທີ່ພົ້ນສະໄໝ; ສະຖາປະນາສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວຂຶ້ນ; ປະເທດລາວ ຈາກບ່ອນຕົກເປັນເມືອງຂຶ້ນຂອງພວກຈັກກະພັດໄດ້ກາຍເປັນປະເທດເອກະລາດ ແລະ ເອກະພາບ; ປະຊາຊົນລາວບັນດາເຜົ່າ ຈາກຖານະເປັນຂ້ອຍຂ້າຂອງພວກຈັກກະພັດ ແລະ ສັກດີນາ ໄດ້ກາຍມາເປັນເຈົ້າຂອງປະເທດຊາດ ເຈົ້າຂອງສັງຄົມຢ່າງແທ້ຈິງ ແລະ ພວມກຽມເງື່ອນໄຂທຸກດ້ານ ເພື່ອພາປະເທດຊາດກ້າວຂຶ້ນສູ່ຈຸດໝາຍສັງຄົມນິຍົມ.

ຜ່ານຂະບວນວິວັດແຫ່ງການນຳພາການປະຕິວັດ, ພັກປະຊາຊົນປະຕິວັດລາວ ຍາມໃດກໍ່ໄດ້ເອົາໃຈໃສ່ຝຶກຝົນຫລໍ່ຫລອມ, ກໍ່ສ້າງຕົນເອງເຮັດໃຫ້ມີຄວາມເຕີບໃຫຍ່ເຂັ້ມແຂງຢ່າງບໍ່ຢຸດຢັ້ງ; ຮັກສາໄດ້ທາດແທ້ພັກແບບໃໝ່ຂອງຊົນຊັ້ນກຳມະກອນ, ມີຄວາມປີຊາສາມາດ, ສະຫລາດສ່ອງໃສ ໃນການນຳພາການປະຕິວັດລາວ, ສົມກຽດເປັນກອງນຳໜ້າປະຕິວັດທີ່ເດັດດ່ຽວໝຽວແໜ້ນຂອງຊົນຊັ້ນກຳມະກອນ, ຂອງປະຊາຊົນຜູ້ອອກແຮງງານ ແລະ ຂອງຊາດລາວ, ເປັນຜູ້ຈັດຕັ້ງ ແລະ ນຳພາທຸກໄຊຊະນະຂອງການປະຕິວັດລາວ.

ໂດຍແນໃສ່ຕອບສະໜອງຄວາມຮຽກຮ້ອງຕ້ອງການ ໃນການສຶກສາຄົ້ນຄວ້າປະຫວັດແຫ່ງຄວາມເປັນມາຂອງພັກ ກໍ່ຄືການສຶກສາອົບຮົມກ່ຽວກັບມູນເຊື້ອຂອງພັກໃຫ້ແກ່ຖັນແຖວພະນັກງານ, ສະມາຊິກພັກ ກໍ່ຄືປະຊາຊົນ ແລະ ອະນຸຊົນຮຸ່ນຫລັງ; ປະຕິບັດຕາມຂໍ້ຕົກລົງຂອງຫົວໜ້າສະຖາບັນວິທະຍາສາດສັງຄົມແຫ່ງຊາດ ສະບັບເລກທີ 127/ສວສຊ ລົງວັນທີ 19 ສິງຫາ 2009 ທີ່ເຫັນດີໃຫ້ປັບປຸງເນື້ອໃນປຶ້ມປະຫວັດສາດພັກ (ສະບັບສັງເຂບ); ເພື່ອລະນຶກວັນສ້າງຕັ້ງພັກຄົບຮອບ 55 ປີ ແລະ ຂໍານັບຮັບຕ້ອນກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ, ສະຖາບັນຄົ້ນຄວ້າການເມືອງວິທະຍາ ທີ່ຂຶ້ນກັບສະຖາບັນວິທະຍາສາດສັງຄົມແຫ່ງຊາດ ໄດ້ປັບປຸງ ແລະ ຮຽບຮຽງ ເພີ່ມເຕີ່ມບາງເນື້ອໃນຕື່ມ ໃນປຶ້ມປະຫວັດສາດພັກ (ສະບັບສັງເຂບ) ທີ່ຄະນະຊີ້ນໍາຄົ້ນຄວ້າທິດສະດີ ແລະ ພຶດຕິກໍາສູນກາງພັກ ຈັດພິມຈໍາໜ່າຍໃນເມື່ອປີ 1997. ເນື່ອງຈາກວ່າປຶ້ມເຫລັ້ມນີ້ ເປັນປຶ້ມປະຫວັດສາດພັກ (ສະບັບສັງເຂບ), ສະນັ້ນ ຈິ່ງບໍ່ສາມາດລົງເລິກ ແລະ ສ່ອງແສງໄດ້ຢ່າງຄົບຖ້ວນທຸກເຫດການ, ທຸກການເຄື່ອນໄຫວອັນອຸດົມສົມບູນ ແລະ ປະດິດສ້າງຂອງພັກ, ພຽງແຕ່ຍົກໃຫ້ເຫັນຢ່າງສັງເຂບປະຫວັດແຫ່ງການກໍາເນີດ, ການເຕີບໃຫຍ່ຂະຫຍາຍຕົວ ແລະ ບົດຮຽນແຫ່ງການນໍາພາອັນສະຫລຽວສະຫລາດຂອງພັກ ຢູ່ໃນແຕ່ລະໄລຍະຂອງການປະຕິວັດລາວເທົ່ານັ້ນ. ຢ່າງໃດກໍ່ດີ, ໃນການຈັດພິມປຶ້ມເຫລັ້ມດັ່ງກ່າວ ບໍ່ອາດຫລີກຫລ້ຽງໄດ້ຂໍ້ຂາດຕົກບົກພ່ອງໃນດ້ານຕ່າງໆ, ພວກເຮົາຫວັງຢ່າງຍິ່ງວ່າຈະໄດ້ຮັບຄວາມຕິຊົມຈາກທ່ານຜູ້ອ່ານ ເພື່ອເຮັດໃຫ້ການຈັດພິມຄັ້ງຕໍ່ໄປສົມບູນຍິ່ງຂຶ້ນ.

ເພື່ອປະກອບສ່ວນລະນຶກວັນສ້າງຕັ້ງພັກ ຄົບຮອບ 55 ປີ (22 ມີນາ 1955-22 ມີນາ 2010) ແລະ ຂໍານັບຮັບຕ້ອນກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ, ສະຖາບັນຄົ້ນຄວ້າການເມືອງວິທະຍາ ທີ່ຂຶ້ນກັບສະຖາບັນວິທະຍາສາດສັງຄົມແຫ່ງຊາດ ໄດ້ຮຽບຮຽງເພີ່ມເຕີມປຶ້ມປະຫວັດສາດພັກ (ສະບັບສັງເຂບ) ທີ່ຈັດພິມຈໍາໜ່າຍປີ 1997, ໂດຍໄດ້ເພີ່ມລາຍຊື່ກໍາມະການສູນກາງພັກແຕ່ລະສະໄໝ ແລະ ການນໍາພາຂອງພັກ ໄລຍະແຕ່ກອງປະຊຸມໃຫຍ່ຄັ້ງທີ VI ຫາກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກເຂົ້າຕື່ມ.

ໂດຍປະຕິບັດຕາມແຈ້ງການຂອງຫ້ອງວ່າການສູນກາງພັກ, ສະບັບເລກທີ 199/ຫສພ, ລົງວັນທີ 23 ມີນາ 2010, ທີ່ເຫັນດີໃຫ້ຈັດພິມປຶ້ມປະຫວັດສາດພັກເຫລັ້ມນີ້ ໃນໂອກາດລະນຶກວັນສ້າງຕັ້ງພັກ ຄົບຮອບ 55 ປີ. ສະນັ້ນ, ສະຖາບັນວິທະຍາສາດສັງຄົມແຫ່ງຊາດ ໄດ້ຈັດພິມຈໍາໜ່າຍປຶ້ມເຫລັ້ມນີ້ເປັນຄັ້ງທີ 2.

ສະຖາບັນວິທະຍາສາດສັງຄົມແຫ່ງຊາດ ຂໍສະເດງຄວາມຂອບໃຈທຸກທ່ານ, ທຸກສໍານັກງານອົງການທີ່ໄດ້ປະກອບສ່ວນສະໜອງເອກະສານຂໍ້ມູນໃຫ້ແກ່ການຮຽບຮຽງ ແລະ ຈັດພິມປຶ້ມເຫລັ້ມນີ້ ແລະ ຫວັງວ່າຈະສືບຕໍ່ໄດ້ຮັບການຮ່ວມມືປະກອບສ່ວນຈາກທ່ານໃນໂອກາດຕໍ່ໄປອີກດ້ວຍ.

ຫົວໜ້າສະຖາບັນວິທະຍາສາດສັງຄົມແຫ່ງຊາດ

# ພາກ ໜຶ່ງ
# ການຈັດຕັ້ງອົງການກອມມູນິດທຳອິດຢູ່ລາວ ແລະ ການລຸກຮືຂຶ້ນຢຶດອຳນາດ, ກອບກູ້ເອກະລາດແຫ່ງຊາດ
## ( 1930-1945 )

### *I- ພາຍໃຕ້ແອກປົກຄອງຂອງພວກລ່າເມືອງຂຶ້ນຝຣັ່ງ ປະຊາຊົນລາວຖືກກົດຂີ່ຂູດຮີດຢ່າງໜັກໜ່ວງ.*

ແຕ່ກາງສະຕະວັດທີ XIX ເຖິງຕົ້ນສະຕະວັດທີ XX, ລັດທິທຶນນິຍົມໄດ້ມີການຂະຫຍາຍຕົວ ແລະ ໄດ້ກາຍມາເປັນລັດທິຈັກກະພັດນິຍົມ. ໜຶ່ງໃນບັນດາຈຸດພິເສດທີ່ພົ້ນເດັ່ນຂອງລັດທິຈັກກະພັດ ແມ່ນການລ່າເມືອງຂຶ້ນ.

ໂດຍອີງໃສ່ຈຸດພິເສດດີແນວນັ້ນ, ພວກຈັກກະພັດນິຍົມຝຣັ່ງໄດ້ເລີ່ມປະຕິບັດກົນອຸບາຍຮຸກຮານ ເພື່ອຢຶດຄອງດິນແດນຂອງປະເທດອື່ນເອົາມາເປັນເມືອງຂຶ້ນຂອງຕົນ. ສຳລັບຢູ່ດິນແດນອິນດູຈີນ, ຝຣັ່ງໄດ້ເລີ່ມປະຕິບັດວິທີທາງຮຸກຮານໂກແຊງຊີນ ແຕ່ປີ 1859, ຕໍ່ມາກໍ່ຢຶດອານາມ ແລະ ຕົງແກັງ. ສຳເລັດການຢຶດຄອງຫວຽດນາມໃນປີ 1887. ຝຣັ່ງໄດ້ເຂົ້າຢຶດປະເທດຂະເໝນ ປີ 1884. ສ່ວນດິນລາວໃນສະໄໝນັ້ນໄດ້ຂຶ້ນກັບສະຫຍາມ (ເປັນເມືອງສ່ວຍຂອງສະຫຍາມ), ແຕ່ກ່ອນຈະວາງນະໂຍບາຍຮຸກຮານລາວ, ພວກຝຣັ່ງໄດ້ແຕ່ງຄະນະທີ່ເອີ້ນວ່າສຳຫລວດແມ່ນ້ຳຂອງມາກ່ອນ. ຕໍ່ຈາກນັ້ນ ພວກຝຣັ່ງ ໂດຍມີໂອກູດຊັງ ມາຣີປາວີ (Auguste jean marie

pavie) ເປັນຕົວຕັ້ງຕົວຕີດຳເນີນການເຈລະຈາກັບສະຫຍາມຢູ່ຫລາຍຄັ້ງ, ນອກຈາກນັ້ນ ໃນຖານະເປັນກົງສູນຝຣັ່ງ, ປາວີໄດ້ມາຫລວງພະບາງພົບປະກັບເຈົ້າອຸ່ນຄຳ ທີ່ເປັນເຈົ້າຊີວິດລາວ ໃນສະໄໝນັ້ນ. ໃນທີ່ສຸດຝຣັ່ງກໍ່ສາມາດຍຶດເອົາດິນລາວໄດ້ ໃນປີ 1893. ນັບແຕ່ນັ້ນມາດິນລາວໄດ້ແບ່ງອອກເປັນສອງຕອນ, ຕອນໜຶ່ງ (ທີ່ເປັນດິນແດນລາວໃນປັດຈຸບັນ) ຕົກເປັນເມືອງຂຶ້ນຂອງຝຣັ່ງ ແລະ ອີກຕອນໜຶ່ງ ທີ່ມີຄວາມກວ້າງໃຫຍ່ພໍສົມຄວນຢູ່ຝັ່ງຂວາແມ່ນ້ຳຂອງ ກໍ່ຍັງຄົງຢູ່ໃຕ້ ການປົກຄອງຂອງສະຫຍາມ.

ພວກລ່າເມືອງຂຶ້ນຝຣັ່ງໄດ້ເອົາ 3 ປະເທດອິນດູຈີນເປັນຫົວໜ່ວຍອັນດຽວທີ່ໃສ່ຊື່ວ່າ "ສະຫະພັນອິນດູຈີນຝຣັ່ງເສດ" ຂຶ້ນໂດຍກົງກັບຜູ້ສຳເລັດລາຊະການສູງສຸດຄົນຝຣັ່ງ. ພວກເຂົາຜູກຂາດດ້ານການເມືອງ, ເສດຖະກິດ, ວັດທະນະທຳ, ການທະຫານ ແລະ ການຕ່າງປະເທດຂອງ "ສະຫະພັນ" ອັນນີ້. ນະໂຍບາຍພື້ນຖານທີ່ບໍ່ປ່ຽນແປງຂອງພວກເຂົາຕໍ່ທັງສາມປະເທດນີ້ແມ່ນ: "ປາບໃຫ້ສະຫງົບ" ແລະ "ແບ່ງແຍກເພື່ອປົກຄອງ". ພວກເຂົາແບ່ງສາມປະເທດອອກເປັນ 5 ແຄວັນ: ແຄວັນຕັງແກ້ງ, ແຄວັນອານາມ, ແຄວັນໂກແຊັງຊິນ[1], ແຄວັນກຳປູເຈຍ ແລະ ແຄວັນລາວ; ພວກເຂົາແບ່ງແຍກລະຫວ່າງແຄວັນ, ລະຫວ່າງປະຊາຊາດ, ລະຫວ່າງເຜົ່າ, ລະຫວ່າງທ້ອງຖິ່ນ, ລະຫວ່າງຊັ້ນຄົນ, ລະຫວ່າງຄົນໃນເມືອງ ກັບຄົນຊົນນະບົດ, ລະຫວ່າງຄວາມເຊື່ອຖືທີ່ແຕກຕ່າງກັນ. ພວກເຂົາຖືລາຊະດອນໃນເມືອງຂຶ້ນ "ບໍ່ແມ່ນຄົນ, ພຽງແຕ່ເປັນເຄື່ອງມື ຫລື ວັດຖຸອັນໜຶ່ງທີ່ປາກໄດ້ໄປເປັນ ເພື່ອເຮັດໜ້າທີ່ສ້າງຄວາມຮັ່ງມີສີສຸກໃຫ້ແກ່ພວກເຂົາ

---

[1] ຕັງແກ້ງ: ຫວຽດນາມພາກເໜືອ, ອານາມ: ຫວຽດນາມພາກກາງ, ໂກແຊັງຊິນ: ຫວຽດນາມພາກໃຕ້ (ບ.ກ).

ແຕ່ຢ່າງດຽວທີ່ນັ້ນ". ເຄື່ອງມືຕົ້ນຕໍໃນການປົກຄອງຂອງພວກເຂົາແມ່ນກົດໝາຍ, ຄຸກຄາ, ສານ, ທະຫານ, ຕຳຫລວດ, ອົງການຕາເວນລັບ[1] ແຕ່ລະປີ, ຄົນອິນດູຈີນນັບເປັນໝື່ນໆຄົນໄດ້ຮັບເຄາະກຳຈາກອຳນາດຜະເດັດການຂອງພວກເຂົາ. ພວກສັກດີນາ, ພວກອາດຍາສິດຕ່າງໆ ລ້ວນແຕ່ໄດ້ກາຍເປັນເຄື່ອງມືທີ່ບອກໄດ້ໃຊ້ຟັງຂອງພວກເຂົາ ແລະ ດຳເນີນການກົດຂີ່ຂູດຮີດປະຊາຊົນຜູ້ອອກແຮງງານຕື່ມອີກຕໍ່ໜຶ່ງ. ສ່ວນປະຊາຊົນເຜົ່າຕ່າງໆແມ່ນຖືກກົດຂີ່ຂົ່ມເຫັງຢ່າງໜັກ; ບໍ່ມີສິດເສລີພາບ; ຊີວິດການເປັນຢູ່ນັບມື້ນັບເດືອດຮ້ອນ, ທຸກຈົນຄົ່ນແຄ້ນ ແລະ ສິ້ນເນື້ອປະດາຕົວ. ພວກລ່າເມືອງຂຶ້ນຝຣັ່ງຍັງບັງຄັບໃຫ້ຄົນອິນດູຈີນຕ້ອງບູຊາ "ປະເທດແມ່"[2], ບູຊາຢຳເກງຄົນຝຣັ່ງຜູ້ປົກຄອງ, ທັນຊັ້ນຄົນຊັ້ນເທິງໃນອິນດູຈີນ ໃຫ້ນັບມື້ນັບນິຍົມຝຣັ່ງ.

ຢູ່ພາຍໃຕ້ແອກປົກຄອງຂອງພວກລ່າເມືອງຂຶ້ນຝຣັ່ງ, ປະຊາຊົນສາມຊາດລາວ-ຫວຽດນາມ-ກຳປູເຈຍ ໄດ້ຕົກຢູ່ໃນຊາຕາກຳອັນດຽວກັນ, ເສຍບ້ານເສຍເມືອງ ແລະ ກາຍເປັນຂ້ອຍຂ້າຂອງຊາດອື່ນ. ຍ້ອນແນວນັ້ນ, ການຜູກພັນທີ່ຕ້ອງເປັນໄປ ລະຫວ່າງສາມຊາດນີ້ຈຶ່ງໄດ້ເຜີຍອອກໃຫ້ເຫັນຢ່າງແຈ່ມແຈ້ງວ່າ ການຜູກພັນນັ້ນ ໄດ້ກາຍເປັນກົດເກນພາວະວິໄສແຫ່ງການຄົງຕົວ ແລະ ການຂະຫຍາຍຕົວຂອງສາມຊາດ.

ໃນເວລານັ້ນ, ຝຣັ່ງຖືປະເທດລາວ "ເປັນປ້ອມໝັ້ນອັນກ້າແກ່ນແໜ້ນໜາ, ດ້ານໜຶ່ງແມ່ນເພື່ອປ້ອງກັນເອົາປະເທດນີ້ເອງເພື່ອບໍ່ໃຫ້ອິດທິພົນຂອງອັງກິດແຊກຊຶມເຂົ້າມາໃນລາວ; ອີກດ້ານໜຶ່ງກໍ່ເພື່ອປາບປາມຄວາມພະຍາຍາມໃດໆຂອງຫວຽດນາມທີ່ຈະກໍ່ການກະບົດຂຶ້ນ, ຈຶ່ງຈຳເປັນ

---

[1] ອົງການຕາເວນລັບ ແມ່ນອົງການສອດແນມ (ບ.ກ).

[2] ປະເທດແມ່ ໝາຍເຖິງປະເທດຝຣັ່ງ.

ຕ້ອງເອົາລາວເປັນ "ແນວຫລັງ". ນອກນັ້ນ ພວກເຂົາຍັງຖືວ່າປະເທດລາວເປັນຈຸດເລືອກສັນ ເພື່ອລົງທຶນຍາວນານໃນອະນາຄົດ ທີ່ຈະເກີດປະໂຫຍດຢ່າງຫລວງຫລາຍໃນການຂຸດຄົ້ນບໍ່ຄຳ, ທອງແດງ, ກົ່ວ, ຊືນ, ເຫລັກ, ຖ່ານຫີນ, ມາດ, ຂີ້ເຈຍ, ອັນຕິມວນ, ເກືອກ້ອນ, ຫີນສົ້ມ ແລະ ແກ້ວປະເສີດຊະນິດຕ່າງໆ"[1]. ໄມ້, ຢາຝິ່ນ, ຄັ່ງ, ຍານ, ຂີ້ຊີ, ໝາກແໜ່ງ, ນ້ຳກ້ຽງ, ກາເຟ ແລະ ເຄື່ອງປ່າຂອງນາອື່ນໆ ກໍ່ລ້ວນແຕ່ເປັນສິນຄ້າທີ່ສາມາດກອບໂກຍເອົາໄດ້ງ່າຍ, ໄວ ແລະ ລົງທຶນໜ້ອຍ. ເພື່ອປະຕິບັດແຜນການກອບໂກຍ, ດ້ານໜຶ່ງ ພວກເຂົາຮັກສາອຳນາດຂອງເຈົ້າຊີວິດໄວ້ໂດຍຢູ່ພາຍໃຕ້ການອາລັກຂາຂອງພວກເຂົາ, ຮັກສາລະບອບເຈົ້າກົກເຈົ້າເຫລົ່າພາຍໃຕ້ຮູບການລະບອບກວງລ່າມ ທ້າວຂຸນມຸນນາຍ ເພື່ອໃຊ້ພວກນີ້ເປັນເຄື່ອງມືໃນການບັງຄັບເກັບເກນ, ໃນການປັບໄໝໃສ່ໂທດປະຊາຊົນ ແລະ ອີກດ້ານໜຶ່ງ ພວກເຂົານຳເອົານາຍທຶນອຸດສາຫະກຳ ແລະ ນາຍທຶນກະສິກຳຝຣັ່ງຈຳນວນໜຶ່ງເຂົ້າມາລາວ ເຊັ່ນ: ບໍລິສັດຂຸດຄົ້ນບໍ່ຄຳຍອດນ້ຳຂອງ, ບໍລິສັດສຳຫລວດ ແລະ ຂຸດຄົ້ນບໍ່ແຮ່, ບໍລິສັດກົ່ວຕາເວັນອອກໄກ, ບໍລິສັດປາຣີ ດໍແຣແສັງ-ແຊັງແມັງ ແລະ ອື່ນໆ[2] ປະມານ 30 ບໍລິສັດ. ນອກນັ້ນ ພວກເຂົາຍັງຍຶດເອົາດິນປູກຝັງ, ປ່າດົງພົງໄພນັບເປັນໝື່ນໆ ເຮັກຕາ ເຊັ່ນ: ບໍລິສັດຂຸດຄົ້ນກາເຟ, ບໍລິສັດ "ລາໂຣຊ" ປູກຖົ່ວແຮຢູ່ຊຳເໜືອ, ບໍລິສັດຂຸດຄົ້ນໄມ້ສັກ ແລະ ໆລໆ... ແບບວິທີການຜະລິດທຶນນິຍົມທີ່ພວກ

---

[1] "ຂ້ອຍຮູ້ຫຍັງແດ່ ກ່ຽວກັບປະຫວັດສາດລາວ", ໂປນເລີວີ, ພິມຈຳໜ່າຍໂດຍຂ່າວສານມະຫາວິທະຍາໄລຝຣັ່ງ ປີ 1974.

[2] "ຂ້ອຍຮູ້ຫຍັງແດ່ ກ່ຽວກັບປະຫວັດສາດລາວ", ໂປນເລີວີ, ພິມຈຳໜ່າຍໂດຍຂ່າວສານມະຫາວິທະຍາໄລຝຣັ່ງ ປີ 1974.

ລ່າເມືອງຂຶ້ນຝຣັ່ງນຳເຂົ້າມາລາວ ໄດ້ສ້າງຊົນຊັ້ນອອກແຮງງານໃໝ່ຂຶ້ນຢູ່ໃນສັງຄົມລາວ ຄືຊົນຊັ້ນກຳມະກອນ[1] ພ້ອມກັນນັ້ນ ຊົນຊັ້ນນາຍທຶນນ້ອຍກໍ່ເລີ່ມຕົ້ນກໍ່ຕົວຂຶ້ນ.

ນະໂຍບາຍຄອບຄອງເມືອງຂຶ້ນຂອງຝຣັ່ງຢູ່ລາວ ເປັນນະໂຍບາຍຕົວຢ່າງຂອງລັດທິລ່າເມືອງຂຶ້ນແບບເກົ່າ. ມັນເຮັດໃຫ້ລາວກາຍເປັນຕະຫລາດຈຳໜ່າຍສິນຄ້າ, ເປັນແຫລ່ງຂູດຮີດແຮງງານເພື່ອຂຸດຄົ້ນ ແລະ ກອບໂກຍເອົາຊັບໃນດິນສິນໃນນ້ຳຂອງລາວ. ພວກເຂົາບໍ່ລົງທຶນຫຍັງຫລວງຫລາຍໃນການດຳເນີນທຸລະກິດຢູ່ລາວ, ພວກເຂົາມີແຕ່ຕັ້ງໜ້າຕັ້ງຕາກອບໂກຍເອົາວັດຖຸດິບອັນມີຄ່າທີ່ຂຸດຄົ້ນງ່າຍ ໂດຍໃຊ້ເຄື່ອງຈັກຫລ້າສະໄໝ ແລະ ອີງໃສ່ແຮງງານລາຄາຖືກເປັນຕົ້ນຕໍ, ບັງຄັບຄົນງານເຮັດວຽກໜັກ ແລະ ເວລາອອກແຮງງານຍາວ. ພວກເຂົາວາງເປັນກົດໝາຍ, ອອກຂໍ້ບັງຄັບໃຫ້ຊາຍສະກັນລາວທຸກຄົນທີ່ມີອາຍຸແຕ່ 18 ຫາ 60 ປີຕ້ອງເສຍຄ່າຫົວ. ແຕ່ 18 ປີຫາ 45 ປີຕ້ອງໄປເປັນກຸລີ; ອອກກົດໝາຍພາສີອາກອນຕ່າງໆ ຢ່າງຫລວງຫລາຍ[2]. ພວກເຂົາຍັງໄດ້ລັກເອົາມູນມໍລະດົກອັນປະ

---

[1] ຄົນຫວຽດນາມ ນັບເປັນພັນໆຄົນທີ່ພວກຝຣັ່ງເກັບເກນເອົາຈາກແຄວ້ນອານາມເຂົ້າມາລາວ ໄດ້ສົມທົບເຂົ້າກັບຄົນລາວຮັບຈ້າງ ຢູ່ຕາມວິສາຫະກິດຕ່າງໆ ຂອງຝຣັ່ງກາຍເປັນຊົນຊັ້ນກຳມະກອນຢູ່ໃນລາວ. ຕາມສະຖິຕິປີ 1929, ຈຳນວນກຳມະກອນຢູ່ລາວມີອັດຕາສ່ວນພຽງ 1 ຫາ 2% ຂອງຈຳນວນພົນລະເມືອງ. (ບ.ກ).

[2] ແຕ່ປີ 1907, ຊາຍສະກັນລາວຜູ້ໜຶ່ງ ແຕ່ລະປີຕ້ອງເສຍ 5 ຝຣັ່ງຄຳ, ເປັນກຸລີ 20 ມື້ສຳລັບພາກເໜືອ, 10 ມື້ສຳລັບພາກໃຕ້ ແຕ່ຍົກເວັ້ນໄດ້ຖ້າເສຍເງິນແທນ; ຊາວຕ່າງດ້າວເສຍ 10,50 ຝຣັ່ງ ເປັນພາສີອາກອນ (ໂປນ-ເລີວີ, ປະຫວັດສາດລາວ).

ເສີດຂອງຊາດລາວ ຢູ່ຕາມປູຊະນີຍະສະຖານຕ່າງໆ[1] ຕະຫລອດເຄິ່ງສະຕະວັດ ທີ່ພວກເຂົາປົກຄອງປະເທດລາວນັ້ນ, ພວກເຂົາບໍ່ໄດ້ສ້າງອັນໃດຫລວງຫລາຍເພື່ອປະຊາຊົນລາວ. ໃນເວລານັ້ນ ຄ້າຍທະຫານກັບຄຸກໄດ້ຮັບການກໍ່ສ້າງຂຶ້ນຢ່າງໃຫຍ່ໂຕ, ແໜ້ນໜາ. ພື້ນຖານວັດຖຸເລັກໆ ນ້ອຍໆ ທີ່ພວກເຂົາສ້າງຂຶ້ນໃນເວລານັ້ນ ລ້ວນແຕ່ແມ່ນເພື່ອຮັບໃຊ້ຊີວິດການເປັນຢູ່ຂອງພວກເຂົາ, ຮັບໃຊ້ການປົກຄອງ ແລະ ການກອບໂກຍຂອງພວກເຂົາທີ່ນັ້ນ, ເຊັ່ນ: ໄຟຟ້າ, ໂຮງເລື່ອຍ, ໂຮງສີ, ໂຮງຊ່າງສ້ອມແປງ, ຖະໜົນຫົນທາງ, ການຕິດຕໍ່ສື່ສານ ໆລໆ... ພວກເຂົາສ້າງໂຮງຮຽນຈຳນວນໜຶ່ງ, ມາຮອດປີ 1945 ທົ່ວປະເທດມີໂຮງຮຽນປະຖົມຕອນຕົ້ນ 100 ກວ່າຫລັງ, ປະຖົມຕອນປາຍ 5 ຫລັງ ແລະ ມັດທະຍົມພຽງຫລັງດຽວຢູ່ວຽງຈັນ ເຊິ່ງຈຸດໜັກແມ່ນກໍ່ສ້າງພວກສະໝຽນ, ນາຍພາສາ ແລະ ຂ້າລາຊະການທີ່ບັນຈຸເຂົ້າໃນກົງຈັກປົກຄອງຂອງພວກເຂົາ. ປະຊາຊົນລາວເຜົ່າຕ່າງໆ ກົກໜັງສືເຖິງ 95%. ພວກເຂົາສ້າງໂຮງໝໍຂຶ້ນຈຳນວນໜຶ່ງຢູ່ບາງຕົວເມືອງໃຫຍ່ ເຊິ່ງຈຸດໜັກແມ່ນຮັບໃຊ້ຝຣັ່ງ ແລະ ເຈົ້ານາຍຂ້າລາຊະການ. ປະຊາຊົນລາວຈົມຢູ່ໃນຄວາມມືດມົນ. ໂລກອະຫິວາ, ພະຍາດໝາກສຸກໝາກໃສລະບາດທຸກປີ, ໄຂ້ປ່າ, ໄຂ້ທໍລະພິດ, ໄຂ້ໝາກເຫລືອງ ກາຍເປັນພະຍາດຊໍ້າເຮື້ອ.

ການກະສິກຳທີ່ເປັນຂະແໜງເສດຖະກິດຕົ້ນຕໍຂອງລາວ ໄດ້ຈົມຢູ່ໃນສະພາບຫລ້າຫລັງ, ຂຶ້ນກັບທຳມະຊາດ ແລະ ດຳເນີນການຜະລິດຕາມແບບປະຖົມປະຖານດັ້ງເດີມ. ຄວາມອຶດຢາກເປັນເງົາມືດ ຂົ່ມຂູ່ທຸກໆປີ.

---

[1] ລະຫວ່າງປີ 1931-1932, ພວກຝຣັ່ງໄດ້ເອົາຍອດຄຳທາດຫລວງ, ຈົກເອົາເພັດນິນຈິນດາຢູ່ໃນກາງພະທາດ.

ການຫັດຖະກຳທີ່ເປັນວິຊາຊີບສຳຄັນຂະແໜງໜຶ່ງຂອງປະຊາຊົນລາວ ບໍ່ໄດ້ຮັບການສົ່ງເສີມ ແລະ ກໍ່ບໍ່ຂະຫຍາຍຕົວໄດ້.

ປະຊາຊົນລາວບັນດາເຜົ່າທັງຖືກກົດຂີ່ຂູດຮີດຢ່າງໜັກໜ່ວງ ທັງຖືກປະປ່ອຍໃຫ້ມີຊີວິດຢູ່ໄປຕາມເວນຕາມກຳ. ປະເທດລາວກາຍເປັນປະເທດໜຶ່ງໃນບັນດາປະເທດທີ່ດ້ອຍພັດທະນາທີ່ສຸດໃນໂລກ, ນັ້ນຄືຜົນຮ້າຍອັນຂົມຂື່ນ ແລະ ເຈັບແສບທີ່ສຸດ ເຊິ່ງລັດທິລ່າເມືອງຂຶ້ນໄດ້ສ້າງໄວ້ໃຫ້ແກ່ຄົນລາວ.

ດ້ວຍເຫດນັ້ນ ປະຊາຊົນລາວບັນດາເຜົ່າຈຶ່ງໄດ້ລຸກຂຶ້ນຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຝຣັ່ງ.

## *II- ຂະບວນການຕໍ່ສູ້ຮັກຊາດຂອງປະຊາຊົນລາວເຜົ່າຕ່າງໆ ລະເບີດຂຶ້ນຢ່າງຕໍ່ເນື່ອງກັນ.*

ຕາມກົດເກນຂອງສັງຄົມແລ້ວ, ບ່ອນໃດມີການກົດຂີ່ຂູດຮີດ, ບ່ອນນັ້ນກໍ່ຕ້ອງມີການຕໍ່ສູ້. ຢູ່ໃນສັງຄົມເມືອງຂຶ້ນ ແລະ ສັກດີນາໃນປະເທດລາວ, ຄວາມຂັດແຍ້ງພື້ນຖານສອງປະເພດ ໄດ້ນັບມື້ນັບພົ້ນເດັ່ນຂຶ້ນຄື: ຄວາມຂັດແຍ້ງລະຫວ່າງປະຊາຊົນລາວບັນດາເຜົ່າ ກັບຈັກກະພັດລ່າເມືອງຂຶ້ນຜູ້ຍຶດຄອງ ແລະ ຄວາມຂັດແຍ້ງ ລະຫວ່າງປະຊາຊົນລາວຜູ້ອອກແຮງງານ ເປັນຕົ້ນແມ່ນຊາວນາ ກັບຊົນຊັ້ນສັກດີນາ, ອາດຍາສິດຜູ້ປົກຄອງ.

ໃນສະພາບການດັ່ງກ່າວ, ເອກະລາດອິດສະຫລະພາບ ແລະ ປະຊາທິປະໄຕ ໄດ້ກາຍເປັນຄວາມຮຽກຮ້ອງຕ້ອງການທີ່ເປັນພື້ນຖານ ແລະ ຮີບດ່ວນກວ່າໝູ່ຂອງປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ.

ຍ້ອນແນວນັ້ນ, ໂດຍບໍ່ເອົາຫົວຊາຕໍ່ການຍອມຈຳນົນຂອງພວກເຈົ້າສັກດີນາ ຕໍ່ພວກລ່າເມືອງຂຶ້ນຝຣັ່ງ, ປະຊາຊົນເຜົ່າຕ່າງໆແຕ່ເໜືອຮອດໃຕ້

ໄດ້ພາກັນລຸກຂຶ້ນຕໍ່ສູ້ຕ້ານແອກປົກຄອງຂອງພວກລ່າເມືອງຂຶ້ນຝຣັ່ງ ຢ່າງອົງອາດກ້າຫານ ແລະ ຕໍ່ເນື່ອງກັນ: ການຕໍ່ສູ້ດ້ວຍອາວຸດຂອງປະຊາຊົນອູເໜືອ, ອູໃຕ້ພາຍໃຕ້ການນໍາຂອງເຈົ້າ ວັນນະພູມ ແຕ່ 1899 ເຖິງ 1910; ການຕໍ່ສູ້ດ້ວຍອາວຸດຂອງປະຊາຊົນເຜົ່າຕ່າງໆຢູ່ດົງລະເວນພາຍໃຕ້ການນໍາຂອງອົງແກ້ວ-ອົງກົມມະດໍາ ແຕ່ 1902 ເຖິງ 1937; ການຕໍ່ສູ້ຂອງປະຊາຊົນເຜົ່າຕ່າງໆ ໃນແຂວງສະຫວັນນະເຂດ ພາຍໃຕ້ການນໍາພາຂອງພໍ່ກະດວດແຕ່ 1901 ເຖິງ 1902 ແລະ ມວນຊົນທີ່ເຂົ້າຮ່ວມການຕໍ່ສູ້ສາມາດເຂົ້າຢຶດເອົາໂຕເມືອງສະຫວັນນະເຂດໄດ້ໄລຍະໜຶ່ງ; ການຕໍ່ສູ້ດ້ວຍອາວຸດຂອງປະຊາຊົນແຂວງຫົວພັນ 1914 ເຖິງ 1916 ສາມາດຢຶດເອົາໂຕເມືອງຊໍາເໜືອໄດ້ໄລຍະໜຶ່ງ, ໃນປີ 1924 ໄດ້ຂ້າກອມມີແຊ[1] ຕາຍຢູ່ຊຽງຄໍ້; ການຕໍ່ສູ້ດ້ວຍອາວຸດຂອງເຜົ່າມົ້ງ ພາຍໃຕ້ການນໍາພາຂອງເຈົ້າຟ້າປັດໄຈ ຢູ່ທາງພາກເໜືອຂອງລາວ, ແຕ່ປີ 1918 ເຖິງປີ 1922; ຂະບວນການຕໍ່ສູ້ຂອງຄູຄໍາ, ນັກຮຽນ ແລະ ປະຊາຊົນເມືອງວຽງຈັນ ຕ້ານກັບຝຣັ່ງຜູ້ປົກຄອງໃນປີ 1920; ການຕໍ່ສູ້ດ້ວຍອາວຸດຂອງປະຊາຊົນແຂວງຜົ້ງສາລີພາຍໃຕ້ການນໍາຂອງອົງແສນແຕ່ 1915 ເຖິງ 1927 ສາມາດເຂົ້າຢຶດເອົາຕົວເມືອງຜົ້ງສາລີ ໄດ້ໄລຍະໜຶ່ງ; ນອກຈາກນີ້ ຍັງມີຂະບວນການຕໍ່ສູ້ຂອງພວກພີ່ນ້ອງລື້ ເມືອງສິງ ແລະ ຂະບວນການອື່ນໆ. ທັງໝົດເຫລົ່ານີ້ໄດ້ສະທ້ອນໃຫ້ເຫັນນໍ້າໃຈຕໍ່ສູ້ຢ່າງເດັດດ່ຽວ ພິລະອາດຫານ, ເດັດຂາດບໍ່ຍອມເປັນຂ້ອຍຂ້າ, ເດັດຂາດບໍ່ຍອມເສຍບ້ານ ເສຍເມືອງຂອງປະຊາຊົນລາວເຜົ່າຕ່າງໆ ໃນທົ່ວປະເທດ.

---

[1] ກອມມີແຊ: ແມ່ນຫົວໜ້າປົກຄອງແຂວງທີ່ເປັນຄົນຝຣັ່ງ.

ຂະບວນການຮັກຊາດເຫລົ່ານີ້ ລ້ວນແຕ່ຖືກປາບ. ເຖິງວ່າຖືກຍຸບຍອບລົງ, ແຕ່ຂະບວນການເຫລົ່ານັ້ນ ກໍ່ໄດ້ປະກອບສ່ວນຢ່າງສຳຄັນເຂົ້າໃນການປຸກລຸກ ແລະ ເສີມຂະຫຍາຍຈິດໃຈຮັກຊາດອັນດູດດື່ມ, ມູນເຊື້ອສາມັກຄີຕໍ່ສູ້ອັນກ້າແກ່ນ, ເດັດດ່ຽວບໍ່ອ່ອນຍອມຂອງປະຊາຊົນລາວບັນດາເຜົ່າ ແລະ ໄດ້ປະບົດຮຽນອັນປະເສີດແຫ່ງການຕໍ່ສູ້ໄວ້ໃຫ້ແກ່ພັກ ແລະ ປະຊາຊົນລາວບັນດາເຜົ່າ.

## *III- ຫງວຽນອາຍກວັກ[1] ນັກປະຕິວັດອິນດູຈີນຄົນທຳອິດ ນຳເອົາທິດສະດີມາກ-ເລນິນ ເຂົ້າມາໃນອິນດູຈີນ ແລະ ລາວ.*

ມະຫາປະຕິວັດສັງຄົມນິຍົມ ເດືອນຕຸລາ ລັດເຊຍ ພາຍໃຕ້ການນຳອັນປີຊາສາມາດຂອງເລນິນ ຜູ້ຍິ່ງໃຫຍ່ໄດ້ຮັບໄຊຊະນະທີ່ດັງກ້ອງກັງວານໄປທົ່ວໂລກນັ້ນ ໄດ້ໄຂສັງກາດໃໝ່ໃຫ້ແກ່ສັງຄົມມະນຸດ. ການປະຕິວັດປົດປ່ອຍຊາດ ໄດ້ກາຍເປັນພາກສ່ວນໜຶ່ງ ທີ່ຕິດພັນສະໜິດແໜ້ນກັບການປະຕິວັດສັງຄົມນິຍົມ. ຫງວຽນອາຍກວັກ ທີ່ໄດ້ອອກຈາກອິນດູຈີນ ໄປແຕ່ປີ 1911 ເພື່ອຊອກຫາເສັ້ນທາງປົດປ່ອຍຊາດນັ້ນ ໄດ້ເອົາໃຈໃສ່ຄົ້ນຄວ້າບົດຮຽນການປະຕິວັດເດືອນຕຸລາລັດເຊຍ. ໃນລະດູຮ້ອນປີ 1920, ສະຫາຍໄດ້ອ່ານຮ່າງວິທະຍານິພົນກ່ຽວກັບບັນຫາຊາດ ແລະ ບັນຫາເມືອງຂຶ້ນ ທີ່ເລນິນຮ່າງອອກເປັນເທື່ອທຳອິດ, ແລ້ວສະຫາຍໄດ້ສະຫລຸບຄວາມວ່າ: ມີແຕ່ລັດທິສັງຄົມນິຍົມ, ລັດທິກອມມູນິດທໍ່ນັ້ນ ຈຶ່ງຈະສາມາດປົດປ່ອຍບັນດາປະຊາຊາດທີ່ຖືກກົດຂີ່ ແລະ ຊາວຜູ້ອອກແຮງງານໃຫ້ພົ້ນອອກຈາກແອກເປັນຂ້ອຍຂ້າໄດ້. ຢາກກູ້ຊາດ ແມ່ນບໍ່ມີທາງໃດອື່ນອີກ ນອກຈາກ

[1] ຫງວຽນອາຍກວັກ ແມ່ນຊື່ເກົ່າຂອງໂຮ່ຈີມິນ.

ເສັ້ນທາງປະຕິວັດກຳມະຊີບ. ຈາກນັ້ນ ສະຫາຍໄດ້ນຳເອົາລັດທິມາກ-ເລນິນເຂົ້າມາເຜີຍແຜ່ຢູ່ໃນອິນດູຈີນ.

ທ້າຍປີ 1924, ໃນຖານະເປັນກຳມະການຄະນະພາກຕາເວັນອອກຂອງຄະນະບໍລິຫານງານສາກົນກອມມູນິດ, ສະຫາຍ ຫງວຽນອາຍກວັກໄດ້ມາເຄື່ອນໄຫວຢູ່ກວາງເຈົາ (ປະເທດຈີນ), ເຂົ້າຮ່ວມການກໍ່ສ້າງຂະບວນການປະຕິວັດຂອງບັນດາປະເທດອາຊີອາຄະເນ ແລະ ຊຸກຍູ້ການສ້າງຕັ້ງພັກກອມມູນິດຢູ່ອິນດູຈີນ.

ປີ 1925, ສະຫາຍສ້າງຕັ້ງສະມາຄົມຊາວໜຸ່ມຫວຽດນາມປະຕິວັດຮ່ວມອຸດົມການ ແລະ ຫລັງຈາກນັ້ນ 3 ປີ ອົງການຈັດຕັ້ງຊາວໜຸ່ມດັ່ງກ່າວພ້ອມດ້ວຍບັນດາອົງການຈັດຕັ້ງມະຫາຊົນອື່ນໆ ເຊັ່ນ: ກຳມະບານ, ໜ່ວຍລີງເຄາະແດງ, ສະມາຄົມປະຊາມິດ ກໍ່ໄດ້ຮັບການຈັດຕັ້ງຂຶ້ນຢູ່ວຽງຈັນ, ທ່າແຂກ, ໂພນຕິ້ວ, ບໍ່ແໜ່ງ, ສະຫວັນນະເຂດ ແລະ ປາກເຊ. ແຕ່ເມື່ອພັກຄອມມູນິດອິນດູຈີນ ໄດ້ຮັບການສ້າງຕັ້ງຂຶ້ນໃນປີ 1930, ສະມາຄົມຊາວໜຸ່ມຫວຽດນາມ ປະຕິວັດຮ່ວມອຸດົມການ ກໍ່ໄດ້ຫັນມາເປັນອົງການຈັດຕັ້ງຂອງພັກ.

ກາງປີ 1928, ຫງວຽນອາຍກວັກ ໄດ້ມາພາກອີສານຂອງປະເທດສະຫຍາມ ເພື່ອກໍ່ສ້າງ ແລະ ຊີ້ນຳຂະບວນການ. ຫລັງຈາກໄດ້ໄຂຊຸດອົບຮົມຢູ່ອຸດອນ, ສະຫາຍໄດ້ມອບໝາຍໜ້າທີ່ໃຫ້ບັນດາສະຫາຍທີ່ເຄື່ອນໄຫວຢູ່ທ່າແຂກ, ຊຽງຫວ່າງ ແລະ ສະຫວັນນະເຂດ. ຕໍ່ຈາກນັ້ນ, ສະຫາຍໄດ້ຮຽກໂຮມບັນດາສະຫາຍທີ່ເຄື່ອນໄຫວຢູ່ວຽງຈັນ ໄປປະຊຸມກັນຢູ່ໃນວັດແຫ່ງໜຶ່ງໃນເມືອງໜອງຄາຍ ເພື່ອຊອກຮູ້ສະພາບການຢູ່ລາວ ເປັນຕົ້ນຢູ່ວຽງຈັນ. ສະຫາຍໄດ້ປະກອບຄວາມຄິດຄວາມເຫັນກ່ຽວກັບການປະຕິບັດ



**ຫງວຽນອາຍກວັກ (ປະທານ ໂຮ່ຈິມິນ)**

ຜູ້ສ້າງຕັ້ງພັກກອມມູນິດອິນດູຈີນ (ພາບຊຸມປີ 1930)

ແນວທາງປະຕິວັດ ແລະ ວິທີການປຸກລຸກຂົນຂວາຍຈັດຕັ້ງມະຫາຊົນຢູ່ລາວ. ສະຫາຍໄດ້ເວົ້າວ່າ: "ການປະຕິວັດ ແມ່ນພາລະກິດຂອງປວງຊົນ, ກຳມະກອນ-ຊາວນາເປັນກຳລັງກົກຮາກຂອງການປະຕິວັດ, ແຕ່ຕ້ອງມີພັກທີ່ໜັກແໜ້ນເຂັ້ມແຂງນຳພາ, ການປະຕິວັດຈຶ່ງຈະໄດ້ຮັບໄຊຊະນະ". ສະຫາຍຍັງໄດ້ເນັ້ນອີກວ່າ: ຄົນອິນດູຈີນຜູ້ໃດ ຢູ່ບ່ອນໃດກໍ່ຕ້ອງເຮັດການປະຕິວັດ ຂັບໄລ່ຈັກກະພັດຝຣັ່ງຢູ່ບ່ອນນັ້ນ"[1]. ໃນລະຫວ່າງທ້າຍປີ 1928, ສະຫາຍຫາງວຽນອາຍກວັກ ໄດ້ປອມຕົວເປັນຊ່າງໄມ້ອອກຈາກດິນສະຫຍາມເຂົ້າມາລາວ ໂດຍຜ່ານເມືອງປາກເຊ ຍ່າງຂຶ້ນມາສະຫວັນນະເຂດ ເຖິງຊຽງຫວ່າງເພື່ອສັງເກດເບິ່ງສະພາບການ ແລະ ຊີວິດການເປັນຢູ່ຂອງປະຊາຊົນ ດ້ວຍຕົນເອງ, ແລ້ວກັບຄືນໄປປະເທດສະຫຍາມ[2].

ແນວປູກປະຕິວັດ ເຊິ່ງ ຫາງວຽນອາຍກວັກ ແລະ ນັກກອມມູນິດຄົນອື່ນໆ ໄດ້ຫວ່ານເຂົ້າໃນຂະບວນການກຳມະກອນ ແລະ ຂະບວນການຮັກຊາດໃນເວລານັ້ນ ໄດ້ແຕກໜໍ່ຂະຫຍາຍຕົວຢ່າງໄວວາ ແລະ ໄດ້ກາຍເປັນກະແສຟອງປະຕິວັດ ຂອງມວນຊົນຢ່າງຟົດຟື້ນ. ໃນຊຸມປີ 1928-1929 ຢູ່ 3 ປະເທດໃນອິນດູຈີນ, ຖືກຕາມຂໍ້ວິນິດໄສຂອງສະຫາຍ ທີ່ໄດ້ເວົ້າໄວ້ແຕ່ປີ 1921 ວ່າ: "ຄົນອິນດູຈີນພວມເຊື້ອງອຳອັນໃດອັນໜຶ່ງທີ່ຟົດເດືອດຢູ່ໃນໃຈ ພວມແຜດສຽງອອກ ແລະ ຈະລະເບີດຂຶ້ນຢ່າງແຮງເມື່ອກາລະໂອກາດມາເຖິງ. ພາກສ່ວນທີ່ນຳໜ້າມີໜ້າທີ່ຕ້ອງຊຸກຍູ້ເຮັດໃຫ້ກາລະໂອກາດນັ້ນມາເຖິງໄວເຂົ້າ"[3].

---

[1] -[2] ຕາມການບອກເຫລົ່າຂອງຫາງວຽນຕ່າຍ ຜູ້ຕິດຕາມຫາງວຽນອາຍກວັກ ເຂົ້າມາລາວ.

[3] ໂຮ່ຈິມິນ: ນິພົນຄົບຊຸດ, ເຫລັ້ມ I, ສຳນັກພິມຈຳໜ່າຍຊືເຖິດ, ຮ່າໂນ້ຍ 1980, ໜ້າ 10.

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ